ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເມືອງ ສະໜ້ອຍ

ຫ້ອງການກະກຳ ແລະ ສິ່ງແວດລ້ອມເມືອງ

ເລກທີ...215../ຫສມ

ວັນທີ....8..5..2026..

# ແຈ້ງການປະມູນ

ເຖິງ : ບໍລິສັດ ຜູ້ຮັບເໝົາກໍ່ສ້າງ ແລະ ສ້ອມແປງຊົນລະປະທານ, ເຄຫາສະຖານ ທີ່ຢູ່ພາຍໃນ ແລະ ຕ່າງແຂວງ ທີ່ນັບຖື

ເລື່ອງ: ການປະມູນ ໂຄງການກໍ່ສ້າງສູນບໍລິການທາງດ້ານເຕັກວິຊາການ ຕາແສງອາຈາ ເມືອງ ສະໜ້ອຍ ແຂວງ ສາລະວັນ

- ອີງຕາມ: ກົດໝາຍສະບັບເລກທີ 30 /ສພຊ, ລົງວັນທີ 2 ພະຈິກ 2017 ວ່າດ້ວຍການປະມູນຈັດຊື້ຈັດຈ້າງດ້ວຍທຶນຂອງລັດ
- ອີງຕາມ: ກົດໝາຍເລກທີ 68 /ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍ ການປົກຄອງທ້ອງຖິ່ນ(ສະບັບປັບປຸງ) ແລະ ແຜນຍຸດທະສາດ ການພັດທະນາເສດຖະກິດ - ສັງຄົມ 5 ປີ ຂອງເມືອງ ແລະ ແຂວງວາງອອກ
- ອີງຕາມ: ຂໍ້ຕົກລົງຂອງເຈົ້າເມືອງໆ ສະໜ້ອຍ ສະບັບເລກທີ 96/ຈມ,ສໝ ລົງວັນທີ 24 ກັນຍາ 2022, ວ່າດ້ວຍ : ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ
- ອີງຕາມ: ຂໍ້ຕົກລົງຂອງຄະນະປົກຄອງເມືອງ ສະໜ້ອຍ ສະບັບເລກທີ 105 /ຄປມ, ລົງວັນທີ 24 / 4 / 2026 ວ່າດ້ວຍ: ອະນຸມັດໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ຈັດການປະມູນທາບທາມລາຄາຊອກຫາ ເອົາບໍລິສັດ ຜູ້ທີ່ມີເງື່ອນໄຂເຂົ້າມາຮັບເໝົາ ໂຄງການກໍ່ສ້າງສູນບໍລິການທາງດ້ານເຕັກວິຊາການ ຕາແສງອາຈາ ເມືອງ ສະໜ້ອຍ ແຂວງ ສາລະວັນ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ໃນນາມເຈົ້າຂອງໂຄງການ ຂໍຖືເປັນກຽດແຈ້ງການມາຍັງ ບັນດາທ່ານ ບໍລິສັດ, ຫົວໜ່ວຍທຸລະກິດທັງພາຍໃນ ແລະ ຕ່າງແຂວງ ຫາກມີຄວາມສົນໃຈເຂົ້າມາຮ່ວມການປະມູນທາບທາມລາຄາ ໂຄງການກໍ່ສ້າງສູນບໍລິການທາງດ້ານເຕັກວິຊາການ ຕາແສງອາຈາ ເມືອງ ສະໜ້ອຍ ແຂວງ ສາລະວັນ ເພື່ອມາຮັບເໝົາກໍ່ສ້າງ ຖ້າບໍລິສັດ ຫຼື ຫົວໜ່ວຍທຸລະກິດໃດສົນໃຈ ແມ່ນໃຫ້ມາຕິດຕໍ່ພົວພັນນຳ ໜ່ວຍງານຊົນລະປະທານ ອຸຕຸນິຍົມ ແລະ ອຸທົກກະສາດ ສ່ວນການສຳລະສະສາງ ແມ່ນອີງຕາມແຜນສົກງົບປະມານໃນແຕ່ລະປີ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ໂຄງການກໍ່ສ້າງສູນບໍລິການທາງດ້ານເຕັກວິຊາການ ຕາແສງອາຈາ ເມືອງ ສະໜ້ອຍ ແຂວງ ສາລະວັນ ເວລາໃນການກໍ່ສ້າງແມ່ນກຳນົດ 24 ເດືອນ ເຊິ່ງເລີ່ມແຕ່ມື້ເຊັນສັນຍາເປັນຕົ້ນໄປ
2. ເອກະສານປະມູນສາມາດສະເໜີຊື້ ທີ່ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ສະໜ້ອຍ ໃນເວລາທາງລັດສະການເຊິ່ງກຳນົດຊຸດລະ 2,000,000 ກີບ (ສ່ວນການຊື້ຊອງແມ່ນກຳນົດ 15 ວັນ ນັບແຕ່ການແຈ້ງປະມູນ)
3. ກອງປະຊຸມການປະມູນຈະໄດ້ຈັດຂຶ້ນຫຼັງທີ່ມີບໍລິສັດມາຊື້ຊອງປະມູນຄົບ 3 ຊອງຂຶ້ນໄປ ແລະ ສົ່ງຊອງ ຕາມກຳນົດເວລາທີ່ທາງໜ່ວຍງານວາງໄວ້ ເຊິ່ງສາມາດ ( ປະກອບເອກະສານຕາມໃບແນະນຳ )

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ສະໜ້ອຍ

ສົມສັກ ແກ້ວບຸນຜາ

ໜ່ວຍງານຊົນລະປະທານ ອຸຕຸນິຍົມ ແລະ ອຸທົກກະສາດ ເບີໂທຕິດຕໍ່ 020 97658646